ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຜົນການດຳເນີນທຸລະກິດປະຈຳໄຕມາດ 3

30 ກັນຍາ 2017



ຖະໜົນມິດຕະພາບ ລາວ-ໄທ; ບ້ານທົ່ງກາງ; ເມືອງສີສັດຕະນາກ; ນະຄອນຫລວງວຽງຈັນ, ສປປ ລາວ ຕູ້ ປ.ນ: 2392; ໂທລະສັບ: (856 21) 316 142;
ໂທລະສານ: (856 21) 316 141 Email: edlgenhq@edlgen.com.la; website: www.edlgen.com.la

ສາລະບານ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.....2

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ: 3

3. ກົງຈັກການຈັດຕັ້ງ. 4

3.1 ໂຄງຮ່າງການຈັດຕັ້ງ.....4

4. ຄະນະກຳມະການຕ່າງໆ.....7

4.1 ຄະນະກຳມະການຂອງສະພາບໍລິຫານ. 7

1. ຄະນະກຳມະການກວດສອບ..... 7

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....7

3. ຄະນະກຳມະການກຳນົດຄ່າຕອບແທນ.....7

4. ຄະນະກຳມະການຄັດເລືອກ.....7

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ.....7

4.2. ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່.....7

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ 7

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ).....8

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ).....8

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ. 8

5.1 ການຜະລິດ.....8

5.2 ລາຍຮັບ. 8

5.3 ລາຍຈ່າຍ. 8

5.4 ກຳໄລໃນການດຳເນີນທຸລະກິດ 9

5.5 ການມອບພັນທະ.....9

ເອກະສານລາຍງານການເງິນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາໃຫ້ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລິກ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າເຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະພະນັກງານສຳນັກງານໃຫຍ່ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ້ມທຶນດ້ວຍການອອກຮຸ້ນຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບລາວ ເພື່ອຈຳໜ່າຍຮຸ້ນໃນຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ຊັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນ ແລະ ແບບສະເໜີຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງ ປະກອບມີ:ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດໃຫ້ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ມີຕົວເລກຢູ່ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດທະບຽນເປັນເງິນ 4.904.867.060.000 ກີບ ແລະມີຮຸ້ນທັງໝົດ 1.226.216.765 ຮຸ້ນ ຊັດສ່ວນການຖືຮຸ້ນຍັງຮັກສາເໝືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການຈັດລຳດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມຊັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ້ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນ ເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ຊັດສ່ວນການຖືຮຸ້ນຍັງຮັກສາເໝືອນເດີມ.

ໃນ ວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫາລັດທີ່ປະເທດໄທ ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບໍພາກຂະຫຍາຍ, ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ ,ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນ ແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການຜູ້ ຜະລິດໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບໝໍ້ານໍ້ລິການ ການເດີນເຄື່ອງ ແລະບຳລຸງຮັກສາ (Operation& Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆໃນຂອບເຂດທົ່ວປະເທດ.

❖ ວິໄສທັດ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ມີຄວາມປາດຖະໜາຢ່າງແຮງກ້າ. (1) ເປັນບໍລິສັດນຳໜ້າ ອັນດັບໜຶ່ງ ຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານໄຟຟ້າຢ່າງພຽງພໍ ແລະ ທັນການໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ. (2) ເປັນບໍລິສັດທີ່ຈະປະກອບສ່ວນຢ່າງ ແຂງແຮງສ້າງໃຫ້ ສປປ ລາວ ກາຍເປັນຫມໍ້ໄຟຂອງອາຊຽນ ແລະ ປະກອບສ່ວນຢ່າງເຕັມກຳລັງ ເພື່ອເຮັດໃຫ້ ຂົງເຂດອາຊຽນມີຄວາມຫມັ້ນຄົງທາງດ້ານພະລັງງານໄຟຟ້າຢ່າງຍືນຍົງ.

❖ ພັນທະກິດ


1. ເປັນບໍລິສັດນຳໜ້າອັນດັບຫນຶ່ງໃນການດຳເນີນທຸລະກິດຜະລິດໄຟຟ້າ ເພື່ອຮັບໃຊ້ພາຍໃນປະເທດ ແລະ ພາຍໃນຂົງເຂດພາກພື້ນດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.
2. ຢືນຄຽງຄູ່ ແລະ ສົມທົບຢ່າງສະຫນິດແຫນ້ນກັບ ລັດວິສາຫະກິດໄຟຟ້າລາວ ຮ່ວມຮັກສາຄວາມຫມັ້ນຄົງ ທາງດ້ານພະລັງງານບໍ່ວ່າທາງດ້ານປະລິມານກໍຄຸນນະພາບ ເພື່ອສະໜອງໃຫ້ແກ່ການພັດທະນາເສດຖະ ກິດ-ສັງຄົມ ໃນຂອບເຂດທົ່ວປະເທດ ແລະໃນຂົງເຂດອາຊຽນ.
3. ຕັ້ງໜ້າຍົກສູງ ແລະພັດທະນາຄຸນສົມບັດ ແລະຄວາມສາມາດຂອງພະນັກງານ ຂອງ ບໍລິສັດ ໃນທຸກ ລະດັບໃຫ້ມີຄວາມກ້າວໜ້າ ແລະມີສ່ວນຮ່ວມໃນການຂະຫຍາຍ ແລະພັດທະນາບໍລິສັດດ້ວຍຄວາມ ຮູ້ສຶກທີ່ພາກພູມໃຈ, ມີຄວາມຮັບຜິດຊອບ ແລະເປັນເຈົ້າຂອງ.

3. ภาวะการจัดตั้ง

3.1 โครงสร้างการจัดตั้ง

ໂຄງຮ່າງການຈັດຕັ້ງ ຜ-ຟຟລ ປະກອບດ້ວຍສະພາບໍລິຫານ 09 ທ່ານ (ໃນນີ້ຜູ້ອຳນວຍການອິດສະຫລະ 3 ທ່ານ) ຄະນະຜູ້ອຳນວຍການໃຫຍ່ 4 ທ່ານ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ 2 ທ່ານ, ມີ 5 ຝ່າຍ, 15 ພະແນກ ແລະ 10 ເຂື່ອນ.

ໂຄງຮ່າງການຈັດຕັ້ງ ບໍລິສັດ ຜະລິດ - ໄຟຟ້າລາວ ມະຫາຊົນ



❖ **ຈຳນວນພົນ**

ຈຳນວນພົນ ຂອງ ຜ-ຟຟລ ມີທັງໝົດ 805 ຄົນ, ຍິງ 155 ຄົນ; ໃນນີ້ ພະນັກງານຖາວອນ 582 ຄົນ, ຍິງ 99 ຄົນ, ພະນັກງານສັນຍາຈ້າງ 223 ຄົນ, ຍິງ 56 ຄົນ.

ລາຍລະອຽດ	ພະນັກງານຖາວອນ		ພະນັກງານສັນຍາຈ້າງ	
ສຳນັກງານໃຫຍ່	90 ຄົນ,	ຍິງ 29 ຄົນ	24 ຄົນ,	ຍິງ 9 ຄົນ
ເຂື່ອນໄຟຟ້ານ້ຳງື່ມ 1	129 ຄົນ,	ຍິງ 31 ຄົນ	48 ຄົນ,	ຍິງ 10 ຄົນ
ເຂື່ອນໄຟຟ້ານ້ຳຄານ 2-3	54 ຄົນ,	ຍິງ 4 ຄົນ	15 ຄົນ,	ຍິງ 6 ຄົນ
ເຂື່ອນໄຟຟ້າເຊເສັດ 1-2	75 ຄົນ,	ຍິງ 15 ຄົນ	58 ຄົນ,	ຍິງ 8 ຄົນ
ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່	36 ຄົນ,	ຍິງ 1 ຄົນ	3 ຄົນ,	ຍິງ 0 ຄົນ
ເຂື່ອນໄຟຟ້ານ້ຳເລົາ	50 ຄົນ,	ຍິງ 4 ຄົນ	19 ຄົນ,	ຍິງ 5 ຄົນ
ເຂື່ອນໄຟຟ້ານ້ຳມັງ 3	49 ຄົນ,	ຍິງ 7 ຄົນ	8 ຄົນ,	ຍິງ 4 ຄົນ
ເຂື່ອນໄຟຟ້າເຊເສັດ 3	24 ຄົນ,	ຍິງ 3 ຄົນ	11 ຄົນ,	ຍິງ 5 ຄົນ
ເຂື່ອນໄຟຟ້ານ້ຳສະນ໋ຳ	19 ຄົນ,	ຍິງ 0 ຄົນ	10 ຄົນ,	ຍິງ 3 ຄົນ
ເຂື່ອນໄຟຟ້ານ້ຳຊອງ	20 ຄົນ,	ຍິງ 1 ຄົນ	7 ຄົນ,	ຍິງ 3 ຄົນ
ເຂື່ອນໄຟຟ້າແຊລະບ໋ຳ	30 ຄົນ,	ຍິງ 4 ຄົນ	16 ຄົນ,	ຍິງ 3 ຄົນ
ເຂື່ອນໄຟຟ້າຕາດສະແລນ	6 ຄົນ,	ຍິງ 0 ຄົນ	4 ຄົນ	ຍິງ 0 ຄົນ
ລວມທັງໝົດ	**582 ຄົນ,**	**ຍິງ 99 ຄົນ**	**223 ຄົນ,**	**ຍິງ 56 ຄົນ**

* **ໝາຍເຫດ :** ຜ-ຟຟລ ໄດ້ສົ່ງພະນັກງານໄປຮັບເໝົ້າການເດີນເຄື່ອງ-ການບຳລຸງຮັກສາ ຢູ່ເຂື່ອນໄຟຟ້ານ້ຳຄານ 3 ເຂື່ອນໄຟຟ້າເຊເສັດ 3 & ເຂື່ອນໄຟຟ້າຕາດສະແລນ

ຄະນະສະພາບໍລິຫານ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ



ທ່ານ ບຸນອຸ້ມ ສີວັນເພັ້ງ
ຮອງປະທານສະພາບໍລິຫານ



ທ່ານ ນ. ລັດຕະນາ ປະທຸມວັນ
ກຳມະການ



ທ່ານ ບຸນມາ ມະນີວົງ
ກຳມະການ



ທ່ານ ນ. ວານິດາ ສະຫວັດດີ
ກຳມະການ



ທ່ານ ສີຈາດ ບຸດຊາກິດຕິລາດ
ກຳມະການ



ຮສ.ປອ. ກອງສີ ແສງມະນີ
ກຳມະການອິດສະຫລະ



ສຈ.ປອ. ຄາລືຊາ ນວນສະຫວັນ
ກຳມະການອິດສະຫລະ



ຮສ. ຄຳເພີຍ ພົມມະຈັນ
ກຳມະການອິດສະຫລະ

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ນ. ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ



ທ່ານ ປອ. ບຸນສະຫລອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ



ທ່ານ ພູມມີ ເນຕິບັນດິດ
ຮອງຜູ້ອຳນວຍການໃຫຍ່
ສາຍງານຜະລິດ



ທ່ານ ວິຣະຖາ ພອນແກ້ວ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍພັດທະນາທຸລະກິດ



ທ່ານ ນ. ສຸກສັນ ພິງພິລາ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍແຜນການ

4. ຄະນະກຳມະການຕ່າງໆ.

ເພື່ອເຮັດໃຫ້ວຽກງານຂອງບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ມີລະບຽບແບບແຜນ ຕາມກົດໝາຍກົດລະບຽບ ທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ, ລະອຽດດັ່ງລຸ່ມນີ້:

4.1. ຄະນະກຳມະການຂອງສະພາບໍລິຫານ

1. ຄະນະກຳມະການກວດສອບ

ໃນການດຳເນີນງານ ໄຕມາດ 3 ປີ 2017 ຄະນະກຳມະການກວດສອບພາຍໃນ ໄດ້ເປີດກອງປະຊຸມຂຶ້ນ 1 ຄັ້ງ:

- ວັນທີ 17 ສິງຫາ 2017 ໄດ້ເປີດກອງປະຊຸມສາມັນ ຄັ້ງທີ 3 ເພື່ອປຶກສາຫາລື ກ່ຽວກັບຮ່າງບົດລາຍງານ ປະຈຳ 6 ເດືອນ ຕົ້ນປີ 2017 ຊຶ່ງໄດ້ຜ່ານການກວດສອບຈາກຜູ້ກວດສອບພາຍນອກ (KPMG).

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ໃນການດຳເນີນງານ ໄຕມາດ 3 ປີ 2017 ຄະນະກຳມະການ ຄຸ້ມຄອງຄວາມສ່ຽງ ໄດ້ເປີດກອງປະຊຸມຂຶ້ນ 1 ຄັ້ງ:

- ໃນວັນທີ 03 ກໍລະກົດ 2017 ໄດ້ຈັດກອງປະຊຸມ ປຶກສາຫາລືກ່ຽວກັບໜ້າວຽກຕ່າງໆ ຂອງຄະນະ ກຳມະການຄຸ້ມຄອງຄວາມສ່ຽງ ຂອງ ຜ-ຟຟລ, ຊຶ່ງສ່ວນໃຫຍ່ແມ່ນໄດ້ປຶກສາຫາລື ກ່ຽວກັບຄວາມ ສ່ຽງທາງດ້ານການເງິນເປັນສ່ວນໃຫຍ່.

3. ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການ ກຳນົດຄ່າຕອບແທນ ໄດ້ຖືກແຕ່ງຕັ້ງຂຶ້ນໂດຍ ສະພາບໍລິຫານ ຜ-ຟຟລ ຕາມຂໍ້ຕົກລົງ ເລກທີ 0041/ຜ-ຟຟລ. ລົງວັນທີ: 06/01/2017, ປັດຈຸບັນແມ່ນຢູ່ໃນຂັ້ນຕອນກະກຽມການດຳເນີນງານຕາມ ພາລະບົດບາດ.

4. ຄະນະກຳມະການຄັດເລືອກ

ຄະນະກຳມະການຄັດເລືອກ ໄດ້ຖືກແຕ່ງຕັ້ງຂຶ້ນໂດຍ ສະພາບໍລິຫານ ຜ-ຟຟລ ຕາມຂໍ້ຕົກລົງ ເລກທີ 0042/ຜ-ຟຟລ. ລົງວັນທີ: 06/01/2017, ປັດຈຸບັນແມ່ນຢູ່ໃນຂັ້ນຕອນກະກຽມການດຳເນີນງານຕາມພາລະ ບົດບາດ.

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ໃນການດຳເນີນງານ ໄຕມາດ 3 ປີ 2017, ກອງເລຂາຄະນະກຳມະການກວດສອບ ລາຍການທີ່ກ່ຽວ ພັນໄດ້ຈັດກອງປະຊຸມ 02 ຄັ້ງ ແລະ ໄດ້ຮ່າງພາລະບົດບາດຂອງຕົນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ພ້ອມດຽວກັນນີ້ກອງເລຂາຄະນະກຳມະການກວດສອບ ລາຍການທີ່ກ່ຽວພັນ ກໍ່ໄດ້ຮ່າງບົດລາຍງານ ກ່ຽວກັບລາຍການທີ່ກ່ຽວພັນຂອງ ຜ-ຟຟລ ຕໍ່ກອງປະຊຸມສະພາບໍລິຫານ ຄັ້ງວັນທີ 10/11/2017 ແລະ ກະກຽມລາຍງານຕໍ່ຕະຫຼາດຫຼັກຊັບລາວ ຕາມລະບຽບການ.

4.2 ຄະນະກຳມະການຂອງຄະນະອຳນວຍການໃຫຍ່.

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ.

ໃນການດຳເນີນງານ ໄຕມາດ 3 ປີ 2017 ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້-ຂາຍໄຟຟ້າໄດ້ດຳເນີນວຽກງານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ໄດ້ເຈລະຈາສັນຍາສຳປະທານ ຂອງໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ຫ້ວຍລຳພັນໃຫຍ່ ລະຫວ່າງ ລັດຖະບານ ແລະ ຜ-ຟຟລ ຄັ້ງວັນທີ 15 ກັນຍາ 2017.
- ໄດ້ສຳເລັດການລົງນາມສັນຍາ ຮ່ວມຮຸ້ນ ໂຄງການເຂື່ອນໄຟຟ້າເຊກອງ 5 ລະຫວ່າງ ບໍລິສັດ EDL-GEN & A-RKSENA PTE. LTD ຄັ້ງວັນທີ 26 ກັນຍາ 2017.

2. ຄະນະກຳມະການຈັດຊື້ແລະ ສະໜອງວັດສະດຸອຸປະກອນ(ຄຈຊ).

ໃນການດຳເນີນງານ ໄຕມາດ 3 ປີ 2017 ຄະນະກຳມະການ ຈັດຊື້ ຜ-ຟຟລ ໄດ້ເປີດກອງປະຊຸມ ປຶກສາຫາລືວຽກ ງານ ຈັດຊື້-ວ່າຈ້າງ ແລະ ເປີດກອງປະຊຸມເຈລະຈາ-ປຶກສາຫາລື ກັບ ຜູ້ສະໜອງ/ຜູ້ຮັບເໝົາ ຈົນກ້າວໄປສູ່ການເຊັນ ສັນຍາ ຈຳນວນ 5 ໂຄງການ, ໂດຍແບ່ງອອກເປັນ 02 ພາກ ດັ່ງນີ້:

- ພາກການປະຕິບັດວຽກ (Works) ຈຳນວນ 4 ໂຄງການ
- ພາກຈັດຊື້ສິນຄ້າ (Goods) ຈຳນວນ 1 ໂຄງການ

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍແລະ ປະຕິບັດວິໄນ (ຄນຍວ).

ໃນການດຳເນີນງານ ໄຕມາດ 3 ປີ 2017, ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ ກະກຽມຮ່າງຂໍ້ກຳນົດ ສຳຄັນດັ່ງນີ້:

- ໄດ້ຮ່າງຂໍ້ກຳນົດໃໝ່ຂອງ ຜ-ຟຟລ ຈຳນວນ 2 ສະບັບ ກ່ຽວກັບນະໂຍບາຍຄ່າຕອບແທນເບ້ຍປະຊຸມ ຂອງຄະນະກຳມະການຕ່າງໆ ແລະ ຂໍ້ກຳນົດ ວ່າດ້ວຍລະບຽບການຮັບພະນັກງານ ເຂົ້າມາເປັນພະນັກງານ ຜ-ຟຟລ.

5. ການດຳເນີນທຸລະກິດແລະ ຜົນການດຳເນີນງານ

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ ໄດ້ດຳເນີນທຸລະກິດເປັນເວລາເຈັດປີແລ້ວ ໃນການຜະລິດກະ ແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ໃນຂະນະດຽວກັນ ຜ-ຟຟລ ຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນ ໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດ ຫລັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານຂອງ ຜ-ຟຟລ ແລະ ເພື່ອສ້າງພາບພົດ, ຄວາມ ໝັ້ນໃຈຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ຜົນການດຳເນີນທຸລະກິດໃນໄຕມາດນີ້ ຈຶ່ງສັງ ລວມໄດ້ດັ່ງນີ້:

5.1. ການຜະລິດ

ໃນການດຳເນີນງານ ໄຕມາດ 3 ປີ 201 7 ຜ-ຟຟລ ມີເຂື່ອນທີ່ດຳເນີນການ ຜະລິດກະແສໄຟຟ້າ ທັງໝົດ 10 ເຂື່ອນ, ມີກຳລັງຕິດຕັ້ງ ທັງໝົດ 1.131 MW. ເນື່ອງຈາກທຳມະຊາດບໍ່ໄດ້ເອື້ອອຳນວຍໃນການ ຜະລິດກະແສໄຟຟ້າ, ເຮັດໃຫ້ການຜະລິດ ບັນລຸຕົວເລກ 854,76 GWh, ເທົ່າກັບ 90,76% ຂອງແຜນການ.

5.2. ລາຍຮັບ

ລາຍຮັບສ່ວນໃຫຍ່ ຂອງ ຜ-ຟຟລ ແມ່ນລາຍຮັບຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ, ຊຶ່ງລາຍຮັບ ໃນໄຕມາດ 3 ປີ 2017 ນີ້, ຜ-ຟຟລ ສາມາດສ້າງລາຍຮັບໄດ້ 407.372 ລ້ານກີບ, ຫຼຸດແຜນການ 7,91% ໃນນີ້ ລາຍຮັບຈາກການຈຳໜ່າຍກະແສໄຟ 401.584 ລ້ານກີບ ເທົ່າກັບ 98,58% ຂອງ ລາຍຮັບທັງໝົດ ແລະ ລາຍ ຮັບອື່ນໆ 1,42% ຂອງ ລາຍຮັບທັງໝົດ.

5.3. ລາຍຈ່າຍ

ລາຍຈ່າຍໃນການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນໄຕມາດ 3 ປີ 2017 ເປັນເງິນທັງໝົດ 325.051 ລ້ານກີບ, ເທົ່າກັບ 79,79% ຂອງ ລາຍຮັບທັງໝົດໃນນີ້:

ລາຍຈ່າຍໃນການດຳເນີນທຸລະກິດໃນໄຕມາດ3 ປີ 2017			
ລ/ດ	ລາຍການລະອຽດ	ຈຳນວນ ລ້ານກີບ	(%) ທຽບໃສ່ລາຍຮັບທັງໝົດ
1	ຕົ້ນທຶນໃນການຂາຍ	122.450	30,06%
2	ລາຍຈ່າຍທາງການເງິນ	119.929	29,44%
3	ຂາດທຶນອັດຕາແລກປ່ຽນເງິນຕາຕ່າງປະເທດ	44.377	10,89%
4	ລາຍຈ່າຍໃນການດຳເນີນງານ	23.181	5,69%
5	ລາຍຈ່າຍອາກອນກຳໄລ	15.114	3,71%
ລວມທັງໝົດ		**325.051**	**79,79%**

5.4. ກຳໄລໃນການດຳເນີນທຸລະກິດ.

ໃນໄຕມາດ 3 ປີ 2017 ຈະມີກຳໄລຈາກ 2 ພາກຄື:

1. ກຳໄລສຸດທິ ຈາກການດຳເນີນທຸລະກິດ ຂອງ ຜ-ຟຟລ ເອງເປັນເງິນທັງໝົດ 82.321 ລ້ານກີບ.
2. ກຳໄລສຸດທິ ຈາກກຳໄລຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນເປັນເງິນ ທັງໝົດ 146.669 ລ້ານກີບ.

ລວມກຳໄລໃນ ໄຕມາດ 3 ປີ 2017 ທັງໝົດ 228.990 ລ້ານກີບ.

5.5. ການມອບພັນທະ

ຜ-ຟຟລ ແມ່ນ ບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນບໍລິສັດໜຶ່ງ ທີ່ດຳເນີນທຸລະກິດ ພາຍໃຕ້ກົດໝາຍ ຂອງ ສປປລາວ; ດັ່ງນັ້ນ ການມອບພັນທະກໍ່ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ພັນທະທີ່ ຜ-ຟຟລ ມອບໃຫ້ລັດ, ປະກອບດ້ວຍ ອາກອນມູນຄ່າເພີ່ມ, ອາກອນກຳໄລ, ອາກອນເງິນປັນຜົນ, ຄ່າພາກຫລວງ, ອາກອນເງິນເດືອນ-ເງິນບຳເນັດ ແລະ ອາກອນເບ້ຍປະຊຸມ, ໄຕມາດ 3 ປີ 2017 ລວມມອບທັງໝົດ 40.326 ລ້ານກີບ ໃນນີ້ມີ:

ລຳດັບ	ລາຍການລະອຽດ	ຫົວໜ່ວຍ: ລ້ານກີບ
1	ອາກອນມູນຄ່າເພີ່ມ	24.651
2	ອາກອນກຳໄລ	12.278
3	ຄ່າພາກຫລວງ	2.228
4	ອາກອນເງິນເດືອນ / ເງິນບຳເນັດ	1.108
5	ອາກອນເບ້ຍປະຊຸມ	61
ລວມທັງໝົດ		**40.326**

ເອກະສານລາຍງານການເງິນ ໄຕມາດ **3**

30 ກັນຍາ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ເອກະສານລາຍງານການເງິນລວມປະຈຳໄຕມາດ 3 (ກ່ອນກວດສອບ)

ວັນທີ 30 ກັນຍາ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານຖານະການເງິນ ໂດຍຫຍໍ້

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	ບິດ	30 ກັນຍາ	31 ທັນວາ	30 ກັນຍາ	31 ທັນວາ
	ອະທິບາຍ	2017	2016	2017	2016
		(ທົບທວນຄືນ)	(ທົບທວນຄືນ)	(ທົບທວນຄືນ)	
			(ລ້ານກີບ)		
ຊັບສິນ					
ເງິນລົງທຶນ ໃນບໍລິສັດລູກ	*4*	-	-	124.802	81.260
ເງິນລົງທຶນ ໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*5*	2.234.841	2.297.166	2.234.841	2.297.166
ເງິນລົງທຶນຈ່າຍລ່ວງໜ້າ	*6, 13*	3.967.913	3.133.596	3.967.913	3.133.596
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ Swap	*10*	43.919	-	43.919	-
ຊັບສິນຢູ່ພາຍໃຕ້ການສຳປະທານ	*7*	9.510.247	9.435.337	9.376.009	9.412.504
ຊັບສິນທີ່ບໍ່ໝຸນວຽນອື່ນໆ		73.755	130.073	376.263	153.707
ລວມຊັບສິນບໍ່ໝຸນວຽນ		**15.830.675**	**14.996.172**	**16.123.747**	**15.078.233**
ເງິນສົດ ແລະ ທຽບເທົ່າ ເງິນສົດ		1.278.500	2.249.635	1.186.422	2.235.280
ເງິນລົງທຶນໄລຍະສັ້ນ		955.312	918.603	955.312	918.603
ເງິນໃຫ້ກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ	*13*	33.108	-	33.108	-
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	*13*	1.410.966	490.973	1.410.296	491.469
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ Swap ທີ່ຈັດເປັນໄລຍະສັ້ນ	*10*	14.425	-	14.425	-
ເຄື່ອງໃນສາງ		4.363	4.765	4.363	4.765
ຊັບສິນໝຸນວຽນອື່ນໆ		223.081	74.747	16.604	8.826
ລວມຊັບສິນໝຸນວຽນ		**3.919.755**	**3.738.723**	**3.620.530**	**3.658.943**
ລວມຍອດຊັບສິນ		**19.750.430**	**18.734.895**	**19.744.277**	**18.737.176**

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2017

ທ່ານ ບຸນສະຫງວ່ຽ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານຖານະການເງິນ ໂດຍຫຍໍ້

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	ບົດ	30 ກັນຍາ	31 ທັນວາ	30 ກັນຍາ	31 ທັນວາ
	ອະທິບາຍ	2017	2016	2017	2016
		(ທົບທວນຄືນ)	(ທົບທວນຄືນ)	(ທົບທວນຄືນ)	
			(ລ້ານກີບ)		
ທຶນຂອງຜູ້ຖືຮຸ້ນ					
ຮຸ້ນທຶນ/ທຶນຈົດທະບຽນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສະສົມຕາມລະບຽບການ		416.729	416.729	416.729	416.729
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		(771)	(1.342)	(771)	(1.342)
ກຳໄລສະສົມ		973.702	1.068.179	976.744	1.070.927
ສ່ວນຂອງຜູ້ຖືຮຸ້ນບໍລິສັດ		9.092.496	9.186.402	9.095.538	9.189.150
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄອບຄຸມ		(340)	-	-	-
ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ		**9.092.156**	**9.186.402**	**9.095.538**	**9.189.150**
ໜີ້ສິນ					
ເງິນກູ້ຢືມໄລຍະຍາວ	*8*	4.384.407	844.299	4.384.407	844.299
ຮຸ້ນກູ້	*9*	4.153.529	3.985.936	4.153.529	3.985.936
ໜີ້ຕ້ອງສິ່ງສັນຍາແລກປ່ຽນ Swap	*10*	42.758	145.676	42.758	145.676
ລວມໜີ້ສິນບໍ່ໝຸນວຽນ		**8.580.694**	**4.975.911**	**8.580.694**	**4.975.911**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານຖານະການເງິນ ໂດຍຫຍໍ້

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	ບິດ	30 ກັນຍາ	31 ທັນວາ	30 ກັນຍາ	31 ທັນວາ
	ອະທິບາຍ	2017	2016	2017	2016
		(ທົບທວນຄືນ)	(ທົບທວນຄືນ)	(ທົບທວນຄືນ)	
			(ລ້ານກີບ)		
ເງິນກູ້ຢືມໄລຍະສັ້ນ	8	828.963	-	828.963	-
ເງິນກູ້ຢືມໄລຍະຍາວ ເຖິງກຳນົດ ຈັດເປັນໄລຍະສັ້ນ	8	529.945	214.484	529.945	214.484
ໜີ້ຕ້ອງສົ່ງຜູ້ສະໜອງ ແລະ ອື່ນໆ		326.601	228.730	317.124	228.730
ໜີ້ຕ້ອງສົ່ງເງິນປັນຜົນ		184.723	-	184.723	-
ໜີ້ຕ້ອງສົ່ງສຳລັບຊັບສິນບັດທີ່ຢູ່ພາຍໃຕ້ການສຳປະທານ	13	-	3.957.400	-	3.957.400
ໜີ້ຕ້ອງສົ່ງ ອາກອນກຳໄລ		-	12.238	-	12.238
ລາຍຈ່າຍຄ້າງຈ່າຍ		206.959	159.355	206.899	158.888
ໜີ້ສິນໝຸນວຽນອື່ນໆ		389	375	391	375
ລວມຍອດໜີ້ສິນໝຸນວຽນ		**2.077.580**	**4.572.582**	**2.068.045**	**4.572.115**
ລວມຍອດໜີ້ສິນ		**10.658.274**	**9.548.493**	**10.648.739**	**9.548.026**
ລວມຍອດທຶນຕົນເອງ ແລະ ໜີ້ສິນ		**19.750.430**	**18.734.895**	**19.744.277**	**18.737.176**

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່

ວັນທີ: 10 ພະຈິກ 2017

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ

ວັນທີ : 10 ພະຈິກ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານຜົນໄດ້ຮັບລວມ ໂດຍຫຍໍ້ (ທົບທວນຄືນ)

		ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ 30 ກັນຍາ		ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ 30 ກັນຍາ	
	ບົດ ອະທິບາຍ	2017	2016	2017	2016
			(ລ້ານກີບ)		
ສືບຕໍ່ດຳເນີນການ					
ຂາຍ	*13*	402.187	389.860	401.584	389.860
ຕົ້ນທຶນໃນການຂາຍ		(123.472)	(112.096)	(122.450)	(112.096)
ກຳໄລລວມ		278.715	277.764	279.134	277.764
ລາຍຮັບອື່ນໆ		5.787	1.147	5.788	1.147
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ		(24.052)	(22.835)	(23.181)	(22.835)
ກຳໄລ/(ຂາດທຶນ) ຈາກອັດຕາແລກປ່ຽນ		(43.671)	(20.202)	(44.377)	(20.202)
ກຳໄລ/(ຂາດທຶນ) ຈາກເງິນລົງທຶນ ໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	*5*	146.669	84.900	146.669	84.900
ກຳໄລຈາກການດຳເນີນງານ		**363.448**	**320.774**	**364.033**	**320.774**
ລາຍຈ່າຍທາງການເງິນ		(119.929)	(32.493)	(119.929)	(32.493)
ກຳໄລກ່ອນອາກອນກຳໄລ		**243.519**	**288.281**	**244.104**	**288.281**
ອາກອນກຳໄລ		(15.114)	(20.359)	(15.114)	(20.359)
ກຳໄລໃນຮອບເວລາ		**228.405**	**267.922**	**228.990**	**267.922**
ກຳໄລທີ່ໄດ້ຮັບ					
ເຈົ້າຂອງ ບໍລິສັດແມ່		229.272	267.922	228.990	267.922
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(867)	-	-	-
ກຳໄລໃນຮອບເວລາ		**228.405**	**267.922**	**228.990**	**267.922**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ *(ກີບ)*	*11*	136,55	159,54	136,38	159,54

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່

ວັນທີ: 10 ພະຈິກ 2017

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ

ວັນທີ: 10 ພະຈິກ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານສ່ວນປ່ຽນແປງຂອງທຶນ ໂດຍຫຍໍ້ (ທົບທວນຄືນ)

	ບົດອະທິບາຍ	ທຶນຈົດທະບຽນ	ສ່ວນເພີ່ມມູນຄ່າຮຸ້ນ	ຄັງສະສົມຕາມລະບຽບການ	ເອກະສານລາຍງານການເງິນແບບລວມ ສ່ວນຂອງຜູ້ຖືຮຸ້ນບໍລິສັດ ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	ກຳໄລສະສົມ	ລວມ	ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ	ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ
					(ລ້ານກີບ)				
ສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2016									
ຍອດເຫຼືອໃນວັນທີ 1 ກໍລະກົດ 2016		**6.717.215**	**985.621**	**361.294**	**(1.731)**	**1.041.809**	**9.104.208**	**-**	**9.104.208**
ກຳໄລໃນຮອບເວລາ		-	-	-	-	267.922	267.922	-	267.922
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*5*	-	-	-	261	-	261	-	261
ຈ່າຍເງິນປັນຜົນ	*12*	-	-	-	-	(218.309)	(218.309)	-	(218.309)
ຍອດເຫຼືອໃນວັນທີ 30 ກັນຍາ 2016		**6.717.215**	**985.621**	**361.294**	**(1.470)**	**1.091.422**	**9.154.082**	**-**	**9.154.082**
ສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2017									
ຍອດເຫຼືອໃນວັນທີ 1 ກໍລະກົດ 2017 (ທົບທວນຄືນ)		**6.717.215**	**985.621**	**416.729**	**(681)**	**929.153**	**9.048.037**	**527**	**9.048.564**
ການໄດ້ມາຊຶ່ງສ່ວນໄດ້ເສຍທີ່ບໍ່ມີ ອຳນາດໃນຄວບຄຸມຂອງລູກ		-	-	-	-	-	-	-	-
ກຳໄລໃນຮອບເວລາ		-	-	-	-	229.272	229.272	(867)	228.405
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	*5*	-	-	-	(90)	-	(90)	-	(90)
ຈ່າຍເງິນປັນຜົນ	*12*	-	-	-	-	(184.723)	(184.723)	-	(184.723)
ຍອດເຫຼືອໃນວັນທີ 30 ກັນຍາ 2017		**6.717.215**	**985.621**	**416.729**	**(771)**	**973.702**	**9.092.496**	**(340)**	**9.092.156**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານສ່ວນປ່ຽນແປງຂອງທຶນ ໂດຍຫຍໍ້ (ທົບທວນຄືນ)

	ຍົກ ອະທິບາຍ	ທຶນຈົດທະບຽນ	ສ່ວນເພີ່ມມູນຄ່າ ຮຸ້ນ	ເອກະສານລາຍງານການເງິນແບບແຍກ ຖ້ຽງສະສົມຕາມ ລະບຽບການ	ຜົນຕ່າງຈາກການ ແປງຄ່າ ເອກະສານລາຍ ງານການເງິນ	ກຳໄລສະສົມ	ລວມຍອດທຶນຂອງຜູ້ ຖືຮຸ້ນທັງໝົດ
				(ລ້ານກີບ)			
ໃນຮອບ ສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2016							
ຍອດເຫຼືອໃນວັນທີ 1 ກໍລະກົດ 2016		**6.717.215**	**985.621**	**361.294**	**(1.731)**	**1.041.809**	**9.104.208**
ກຳໄລໃນຮອບເວລາ		-	-	-	-	267.922	267.922
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	5	-	-	-	261	-	261
ຈ່າຍເງິນປັນຜົນ	12	-	-	-	-	(218.309)	(218.309)
ຍອດເຫຼືອໃນວັນທີ 30 ກັນຍາ 2016		**6.717.215**	**985.621**	**361.294**	**(1.470)**	**1.091.422**	**9.154.082**
ໃນຮອບ ສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2017							
ຍອດເຫຼືອໃນວັນທີ 1 ກໍລະກົດ 2017 (ທົບທວນຄືນ)		**6.717.215**	**985.621**	**416.729**	**(681)**	**932.477**	**9.051.361**
ກຳໄລໃນຮອບເວລາ		-	-	-	-	228.990	228.990
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	5	-	-	-	(90)	-	(90)
ຈ່າຍເງິນປັນຜົນ	12	-	-	-	-	(184.723)	(184.723)
ຍອດເຫຼືອໃນວັນທີ 30 ກັນຍາ 2017		**6.717.215**	**985.621**	**416.729**	**(771)**	**976.744**	**9.095.538**

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ : 10 ພະຈິກ 2017

ທ່ານ ທອງມະນີ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ : 10 ພະຈິກ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານກະແສເງິນສົດ ໂດຍຫຍໍ້ (ທົບທວນຄືນ)

	ອ້າງ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ 30 ກັນຍາ 2017	2016	ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ 30 ກັນຍາ 2017	2016
			(ລ້ານກີບ)		
ກະແສເງິນສົດຈາກກິດຈະກຳການດຳເນີນງານ		228.405	267.922	228.990	267.922
ກຳໄລສຳລັບໃນຮອບເວລາ					
ປັບປຸງ:					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		108.522	102.820	108.187	102.820
ລາຍຈ່າຍການເງິນ		119.929	33.402	119.929	33.402
(ກຳໄລ)/ຂາດທຶນ ຈາກອັດຕາແລກປ່ຽນ		56.919	22.128	56.919	22.128
ກຳໄລ ຈາກເງິນລົງທຶນໃນ					
ວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ	5	(146.669)	(84.900)	(146.669)	(84.900)
ລາຍຈ່າຍອາກອນກຳໄລ		15.114	20.359	15.114	20.359
		382.220	**361.731**	**382.470**	**361.731**
ການປ່ຽນແປງ:					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		34.401	443	(122.327)	443
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(628.379)	(236.319)	(628.542)	(236.319)
ອາໄຫ່ ເຄື່ອງໃນສາງ		(4)	289	(4)	289
ຊັບສິນໝຸນວຽນອື່ນໆ		(142.443)	(1.659)	(1.933)	(1.659)
ໜີ້ຕ້ອງສົ່ງຜູ້ສະໜອງການຄ້າ ແລະ ອື່ນໆ		16.864	(19.019)	7.214	(19.019)
ລາຍຈ່າຍຄ້າງຈ່າຍ		6.378	(7.396)	7.871	(7.396)
ໜີ້ສິນໝຸນວຽນອື່ນໆ		(1.238)	59	20	59
ເງິນສົດ ຈາກກິດຈະກຳການດຳເນີນງານ		(332.201)	98.129	(355.231)	98.129
ອາກອນກຳໄລທີ່ໄດ້ຈ່າຍ		(12.278)	(14.309)	(12.278)	(14.309)
ເງິນສົດ ສຸດທິ ຈາກກິດຈະກຳການດຳເນີນງານ		**(344.479)**	**83.820**	**(367.509)**	**83.820**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານກະແສເງິນສົດ ໂດຍຫຍໍ້ (ທົບທວນຄືນ)

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ 30 ກັນຍາ 2017	2016	ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ 30 ກັນຍາ 2017	2016
			(ລ້ານກີບ)		
ກະແສເງິນສົດ ຈາກກິດຈະກຳການລົງທຶນ					
ຈ່າຍເງິນລ່ວງໜ້າສຳລັບເງິນລົງທຶນ		(825.300)	-	(825.300)	-
ເງິນລົງທຶນໃນບໍລິສັດລູກ	4	-	(35.955)	(42.042)	(35.955)
ຊື້ຊັບສິນພາຍໃຕ້ສັນຍາສຳປະທານ		(98.949)	(27.822)	(54.370)	(27.822)
ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ແລະ ວິສາຫະກິດ ຮຸ້ນສ່ວນ	5	(7.441)	(1.460)	(7.441)	(1.460)
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດ ຮຸ້ນສ່ວນ ແລະ ບໍລິສັດຮຸ້ນສ່ວນ	5	208.642	-	208.642	-
ຈ່າຍເງິນລົງທຶນໄລຍະສັ້ນ		(24.831)	(809.311)	(24.831)	(809.311)
ຈ່າຍເງິນໃຫ້ພາກສ່ວນກ່ຽວຂ້ອງກູ້ຢືມໄລຍະສັ້ນ	13	(33.108)	-	(33.108)	-
ເງິນສົດ ສຸດທິ ທີ່ໃຊ້ໃນກິດຈະກຳການລົງທຶນ		**(780.987)**	**(874.548)**	**(778.450)**	**(874.548)**
ກະແສເງິນສົດຈາກ ກິດຈະກຳການເງິນ					
ລາຍຈ່າຍທາງການເງິນ		(85.972)	(8.767)	(85.972)	(8.767)
ລາຍຈ່າຍເງິນປັນຜົນ		-	(218.310)	-	(218.310)
ຮັບເງິນສົດຈາກເງິນກູ້ຢືມໄລຍະສັ້ນ	8	828.500	-	828.500	-
ຮັບເງິນສົດຈາກເງິນກູ້ຢືມໄລຍະຍາວ	8	164.346	-	164.346	-
ຊຳລະເງິນກູ້ຢືມໄລຍະຍາວ	8	(97.220)	(81.638)	(97.220)	(81.638)
ເງິນສົດທີ່ໄດ້ຮັບຈາກການອອກຮຸ້ນກູ້	8	-	2.469.188	-	2.469.188
ເງິນສົດສຸດທິ ໃຊ້ໃນກິດຈະກຳການເງິນ		**809.654**	**2.160.473**	**809.654**	**2.160.473**
ການເພີ່ມຂຶ້ນ/(ຫຼຸດລົງ) ສຸດທິ ເງິນສົດ ແລະ ທຽບເທົ່າເງິນສົດ		(315.812)	1.369.745	(336.305)	1.369.745
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນງວດ		1.589.352	442.830	1.517.767	442.830
ຜົນກະທົບຈາກອັດຕາແລກປ່ຽນ ກັບ ຍອດເຫຼືອ ຂອງເງິນຕາຕ່າງປະເທດ ໃນມື້ສິ້ນງວດ		4.960	5.006	4.960	5.006
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນມື້ສິ້ນງວດ		**1.278.500**	**1.817.581**	**1.186.422**	**1.871.581**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ໃບລາຍງານກະແສເງິນສົດ ໂດຍຫຍໍ້ (ທົບທວນຄືນ)

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບສາມເດືອນສິ້ນສຸດ 30 ກັນຍາ 2017	2016	ເອກະສານລາຍງານການເງິນ ແບບແຍກ ສຳລັບສາມເດືອນສິ້ນສຸດ 30 ກັນຍາ 2017	2016
			(ລ້ານກີບ)		
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ເງິນປັນຜົນຕ້ອງຮັບ		-	149.413	-	149.413
ໜີ້ຕ້ອງສົ່ງຄ່າຊື້ຊັບສິນບັດຄົງທີ່ພາຍໃຕ້ສັນຍາສຳປະທານ		309.737	3.920.740	309.737	3.920.740
ເງິນປັນຜົນຄ້າງຊຳລະ		184.723	-	184.723	-

ທ່ານນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2017

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 10 ພະຈິກ 2017

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍໂດຍຫຍໍ້ ປະກອບເອກະສານລາຍງານການເງິນລວມ

ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2017 (ກ່ອນກວດສອບ)

ບົດອະທິບາຍ	ເນື້ອໃນ
ພື້ນຖານການກະກຽມ	
1	ຂໍ້ມູນທົ່ວໄປ
2	ພື້ນຖານການບັນຊີ
3	ນະໂຍບາຍການບັນຊີໃໝ່
ຊັບສິນ	
4	ເງິນລົງທຶນ ໃນບໍລິສັດລູກ
5	ເງິນລົງທຶນ ໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ
6	ເງິນລົງທຶນຈ່າຍລ່ວງໜ້າ
7	ຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ
ໜີ້ສິນ	
8	ໜີ້ສິນທີ່ມີພາລະດອກເບ້ຍ
9	ຮຸ້ນກູ້
10	ໜີ້ຕ້ອງຈ່າຍ ຂອງສັນຍາ SWAP
ຂໍ້ມູນອື່ນໆ	
11	ກຳໄລພື້ນຖານຕໍ່ຮຸ້ນ
12	ເງິນປັນຜົນ
13	ພາກສ່ວນທີ່ກ່ຽວຂ້ອງ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍໂດຍຫຍໍ້ ປະກອບເອກະສານລາຍງານການເງິນລວມ
ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2017 (ກ່ອນກວດສອບ)

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ ("ກຸ່ມບໍລິສັດ" ຫຼື "ຜ-ຟຟລ") ເປັນ ບໍລິສັດມະຫາຊົນ ເຊິ່ງໄດ້ຈົດທະບຽນ ເຂົ້າໃນຕະຫຼາດ ຫຼັກຊັບ ແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປລາວ"). ກຸ່ມບໍລິສັດ ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນ ກັບ ກະຊວງ ອຸດ ສະຫະກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010. ກຸ່ມບໍລິສັດໃນເຄືອຂອງ ລັດວິສາຫະກິດໄຟຟ້າລາວ ("ຟຟລ") ເຊິ່ງຖືຮຸ້ນ 75%.

ການຈົດທະບຽນຂອງກຸ່ມບໍລິສັດໄດ້ລິເລີ່ມໂດຍ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດ ພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະໃຫ້ກຸ່ມບໍລິສັດ ອີງ ຕາມສຳນັກງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສນຍ ໄດ້ອະນຸມັດໃຫ້ ຟຟລ ຂາຍຮຸ້ນຂອງຕົນໃນໂຄງການໂຮງງານໄຟຟ້າເອກະລາດ ("IPP") ໃຫ້ກັບກຸ່ມບໍລິສັດ.

ໃນວັນທີ 15 ທັນວາ 2010, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້ານ້ຳ ຕົກ, ລວມມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລິກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນ ເຊລະບໍ, ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ໃຫ້ກຸ່ມບໍລິສັດ ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະສືບຕໍ່ກິດຈະກຳຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າທີ່ຜະລິດໂດຍທີ່ມີຢູ່ຊັບສິນການ ຜະລິດໄປເຖິງຜູ້ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ກຸ່ມບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນ ໃຫຍ່ແມ່ນຂຶ້ນຢູ່ກັບ ຊັບສິນການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸໄວ້ໃນ ສັນຍາ ຊື້ຂາຍພະລັງງານ ("PPA").

ນອກຈາກນັ້ນ, ກຸ່ມບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານຂອງກຸ່ມບໍລິສັດ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ເອກະສານລາຍງານການເງິນລວມປະຈຳໄຕມາດ 3 ໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 10 ພະຈິກ 2017 .

2 ພື້ນຖານການບັນຊີ

ເອກະສານລາຍງານການເງິນລວມປະຈຳໄຕມາດ ໄດ້ສ້າງຂຶ້ນຕາມນະໂຍບາຍການບັນຊີຂອງກຸ່ມບໍລິສັດ ຕາມທີ່ໄດ້ອະທິບາຍລະອຽດໃນໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016. ຂໍ້ມູນທາງການເງິນເບື້ອງຕົ້ນ (ຕົວຢ່າງ ໃບສະຫຼຸບຊັບສິມບັດ,ໃບລາຍງານຜົນໄດ້ຮັບ, ໃບລາຍງານກະແສເງິນສົດ ແລະ ລາຍງານສ່ວນປ່ຽນແປງທຶນຕົນເອງຂອງຜູ້ຖືຮຸ້ນ) ສ້າງຂຶ້ນຢ່າງເຕັມຮູບແບບ. ສ່ວນບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ໃນຮູບແບບໂດຍຫຍໍ້.

ເອກະສານລາຍງານການເງິນປະຈຳໄຕມາດ ຄວນຈະອ່ານຄູ່ກັບໃບລາຍງານທາງການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2016.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ໃນລະຫວ່າງປີ ການເງິນທີ່ຄາດວ່າ ຫຼື ຖ້າການຕັດບັນຊີການລາຍງານຊື່ວຄາວເທົ່ານັ້ນ ຖ້າມັນເໝາະສົມທີ່ຄາດວ່າຈະມີ ຫຼື ເລື່ອນການໃຊ້ຈ່າຍດັ່ງກ່າວໃນຊ່ວງທ້າຍປີທາງການເງິນ.

ໃນ ສປປ ລາວ ຍັງບໍ່ທັນໄດ້ມີການອາງມາດຕະຖານບັນຊີ ("LAS"). LAS ກຳລັງມີການພັດທະນາພາຍໃຕ້ກົມບັນຊີ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ (LCPAA). ໃນປັດຈຸບັນ, ບັນດາບໍລິສັດໄດ້ນຳໃຊ້ປຶ້ມຄູ່ມືກ່ຽວກັບ ລະບຽບວິທີປະຕິບັດດ້ານການບັນຊີທີ່ວາງອອກໂດຍ ກະຊວງການເງິນ. ປຶ້ມຄູ່ມືດັ່ງກ່າວ ໄດ້ວາງຂໍ້ແນະນຳຕາມພື້ນຖານເງິນຄ້າງຮັບ - ຄ້າງຈ່າຍ ເຊິ່ງຍັງມີຄວາມແຕກຕ່າງກັນຫຼາຍ ລະຫວ່າງ ປຶ້ມຄູ່ມືດັ່ງກ່າວ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ ເຊັ່ນ: ຊັບສິມບັດຄົງທີ່, ສັນຍາເຊົ່າສິນເຊື່ອ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຈາກອັດຕາແລກປ່ຽນ, ອາກອນລາຍໄດ້ ແລະ ອາກອນຊ້ຳຊ້ອນ, ເຄື່ອງມືທາງການເງິນ, ເອກະສານລາຍງານການເງິນແບບລວມ ແລະ ແບບສະເພາະວິສາຫະກິດ, ຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ຕົ້ນທຶນກ່ອນການດຳເນີນງານ. ຫຼັກການບັນຊີທີ່ນຳໃຊ້ ມີຄວາມແຕກຕ່າງທີ່ສຳຄັນ ໂດຍທຽບຖານຈາກຫຼັກການບັນຊີ ທີ່ຖືກຮັບຮອງເອົາໂດຍທົ່ວໄປ ລວມທັງມາດຕະຖານສາກົນ ດ້ານການລາຍງານການເງິນ ທີ່ຮັບຮອງເອົາໃນບາງປະເທດ ແລະ ບາງຂອບເຂດ.

ໃນການກະກຽມໃບລາຍງານທາງການເງິນ ຜູ້ບໍລິຫານຕ້ອງໃຊ້ການປະເມີນການ ແລະ ຂໍ້ສົມມຸດຖານທີ່ມີຜົນຕໍ່ການລາຍງານຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂອງຊັບສິນ ແລະ ໜີ້ສິນ ທີ່ອາດເກີດຂຶ້ນໃນມື້ທີ່ສະແດງໃນໃບລາຍງານທາງການເງິນ ແລະ ມູນຄ່າຂອງລາຍໄດ້ ແລະ ລາຍຈ່າຍໃນການລາຍງານແຕ່ລະໄລຍະ. ເຖິງແມ່ນວ່າການປະເມີນການຢູ່ບົນພື້ນຖານຂອງຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ເຫດການທີ່ເກີດຂຶ້ນ ແລະ ຜົນທີ່ເກີດຂຶ້ນຈິງ ອາດແຕກຕ່າງຈາກທີ່ປະເມີນການໄວ້ໃນເບື້ອງຕົ້ນ.

3 ນະໂຍບາຍການບັນຊີໃໝ່

ຕັ້ງແຕ່ 1 ມັງກອນ 2017 ເປັນຕົ້ນມາ, ກຸ່ມບໍລິສັດ ໄດ້ຮັບຮອງ ເອົານະໂຍບາຍການບັນຊີໃໝ່ ກ່ຽວກັບເອກະສານລາຍງານການເງິນແບບລວມ. ດັ່ງນັ້ນ ຕົວເລກປຽບທຽບໃນໃບລາຍງານຖານະການເງິນແບບລວມ ວັນທີ 31 ທັນວາ 2016 ຈຶ່ງໄດ້ຖືກກະກຽມໂດຍຜູ້ບໍລິຫານເພື່ອສົມທຽບ.

ພື້ນຖານຂອງການລວມກິດຈະການ

ບໍລິສັດລູກ

ບໍລິສັດລູກແມ່ນນິຕິບຸກຄົນທີ່ຄວບຄຸມໂດຍກຸ່ມ. ກຸ່ມຄວບຄຸມກິດຈະການນິຕິບຸກຄົນເມື່ອໄດ້ຮັບ ຫຼື ມີສິດໃນການໄດ້ຮັບຜົນ ຕອບແທນທີ່ຫຼາກຫຼາຍ ຈາກການມີສ່ວນຮ່ວມກັບກິດຈະການ ແລະ ມີຄວາມສາມາດທີ່ສົ່ງຜົນກະທົບຕໍ່ຜົນຕອບແທນເຫຼົ່ານັ້ນ ຜ່ານສິດທິອຳນາດເໜືອນິຕິບຸກຄົນ. ເອກະສານລາຍງານການເງິນຂອງບໍລິສັດລູກ ແມ່ນໄດ້ລວມຢູ່ໃນເອກະສານລາຍງານການເງິນລວມກິດຈະການ ນັບແຕ່ວັນທີມີການຄວບຄຸມຈົນເຖິງວັນທີການຄວບຄຸມສິ້ນສຸດລົງ.

ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ

ໃນວັນທີ ທີ່ໄດ້ຊື້ກິດຈະການມາ, ກຸ່ມວັດແທກສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມຕາມສັດສ່ວນຂອງຊັບສິນສຸດທິທີ່ໄດ້ມາ. ການປ່ຽນແປງສ່ວນໄດ້ເສຍຂອງກຸ່ມໃນບໍລິສັດລູກນັ້ນບໍ່ແມ່ນຜົນໃນການສູນເສຍການຄວບຄຸມທີ່ກວມເອົາສຳລັບທຸລະກຳໃນຖານະເປັນຜູ້ຖືຮຸ້ນ.

ການສູນເສຍການຄວບຄຸມ

ເມື່ອກຸ່ມສູນເສຍການຄວບຄຸມເໜືອບໍລິສັດລູກ, ຈະຕັດລາຍການຊັບສິນ ແລະ ໜີ້ສິນ ຂອງບໍລິສັດລູກ ແລະສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມທີ່ກ່ຽວຂ້ອງ ແລະ ສ່ວນປະກອບອື່ນຂອງສ່ວນຂອງຜູ້ຖືຮຸ້ນບໍ່ວ່າຈະເປັນຜົນກຳໄລ ຫຼື ຂາດທຶນທີ່ເກີດຂຶ້ນ ຮັບຮູ້ໃນກຳໄລ ຫຼື ຂາດທຶນ. ບໍ່ວ່າຈະເປັນດອກເບ້ຍທີ່ຍັງຄົງເຫຼືອຢູ່ໃນກ່ອນບໍລິສັດລູກຈະວັດແທກໃນມູນຄ່າຍຸດຕິທຳເມື່ອສູນເສຍການຄວບຄຸມ.

ທຸລະກຳທີ່ຕັດອອກໃນເອກະສານລາຍງານການເງິນລວມກິດຈະການ

ຍອດຄົງເຫຼືອ ແລະ ທຸລະກຳພາຍໃນກຸ່ມ ແລະລາຍໄດ້ ຫຼື ຄ່າໃຊ້ຈ່າຍທີ່ຍັງບໍ່ເກີດຂຶ້ນຈາກການເຮັດທຸລະກຳພາຍໃນກຸ່ມ ຈະຖືກຕັດອອກ.

4 ເງິນລົງທຶນໃນບໍລິສັດລູກ

ສຳລັບຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	2017	2016
	(ລ້ານກີບ)	
ວັນທີ 1 ມັງກອນ	81.260	-
ເພີ່ມຂຶ້ນ	43.542	117.215
ວັນທີ 30 ກັນຍາ	**124.802**	**117.215**

ໃນໄລຍະເວລາ ເກົ້າເດືອນສິ້ນສຸດວັນທີ 30 ກັນຍາ, ບໍລິສັດ ໄດ້ມີການເພີ່ມຂຶ້ນຂອງເງິນລົງທຶນໃນບໍລິສັດລູກ ດັ່ງລຸ່ມນີ້:

ບໍລິສັດ ອີດີເອວເຈນໂຊລາ ພາວເວີ້ ຈຳກັດ
ໃນໄລຍະເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017, ບໍລິສັດໄດ້ຊຳລະເງິນທຶນໃຫ້ກັບ ບໍລິສັດ ອີດີເອວເຈນໂຊລາ ພາວເວີ້ ຈຳກັດ, ຈຳນວນ 15.000 ຮຸ້ນ ໃນມູນຄ່າຮຸ້ນລະ 0,1 ລ້ານກີບ, ລວມທັງໝົດຈຳນວນ 1.500 ລ້ານກີບ

ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ
ໃນໄລຍະເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017, ບໍລິສັດໄດ້ຊຳລະເງິນທຶນໃຫ້ກັບ ບໍລິສັດ ອີດີເອວເຈນໂຊລາ ພາວເວີ້ ຈຳກັດ, ລວມທັງໝົດຈຳນວນ 42.042 ລ້ານກີບ

ເງິນລົງທຶນໃນບໍລິສັດລູກ ໃນວັນທີ 30 ກັນຍາ 2017 ແລະ 31 ທັນວາ 2016, ລາຍໄດ້ຈາກເງິນປັນຜົນ ສຳລັບຮອບເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017 ແລະ 2016 ມີດັ່ງນີ້:

	ອັດຕາສ່ວນຂອງເງິນລົງທຶນ			ທຶນທີ່ຖອກແລ້ວ		ເອກະສານລາຍງານການເງິນແບບແຍກ							
						ມູນຄ່າ		ຄ່າເຊື່ອມມູນຄ່າ		ມູນຄ່າສຸດທິ		ລາຍໄດ້ເງິນປັນຜົນ	
	30 ກັນຍາ 2017	31 ທັນວາ 2016	ປະເພດຂອງ ທຸລະກິດ	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	30 ກັນຍາ 2016
	(%)					*(ລ້ານກີບ)*							
ບໍລິສັດ ອີດີເອວເຈນໂຊ່ລ່າ ພາວເວີ້ ຈຳກັດ("ໂຊ່ລ່າ")	60	60	ຜະລິດໄຟຟ້າ	2.500	-	1.500	-	-	-	1.500	-	-	-
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ ("ນ້ຳບີ")	80	80	ຜະລິດໄຟຟ້າ	150.000	80.000	123.302	81.260	-	-	123.302	81.260	-	-
ລວມ						**124.802**	**81.260**	-	-	**124.802**	**81.260**	-	-

5 ເງິນລົງທຶນໃນບໍລິສັດ ວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນ

ສຳລັບຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	2017	2016
	(ລ້ານກີບ)	
ວັນທີ 1 ມັງກອນ	2.297.166	2.268.923
ກຳໄລສຸດທິຂອງຮຸ້ນຈາກວິສາຫະກິດຂາຮຸ້ນແລະບໍລິສັດຮຸ້ນສ່ວນ	267.262	120.930
ລາຍໄດ້ເງິນປັນຜົນ	(339.234)	(156.963)
ເພີ່ມຂຶ້ນ	9.076	1.460
ສ່ວນແຕກຕ່າງຈາກການແລກປ່ຽນ	571	648
ວັນທີ 30 ກັນຍາ	**2.234.841**	**2.234.998**

ໃນໄລຍະເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017 ໄດ້ມີການເພີ່ມຂຶ້ນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດ ຮຸ້ນສ່ວນດັ່ງຕໍ່ໄປນີ້:

ບໍລິສັດນ້ຳດີກ 1 ຈຳກັດ

ໃນວັນທີ 9 ມັງກອນ 2017 , ບໍລິສັດ ໄດ້ລົງທຶນໃນບໍລິສັດໄຟຟ້ານ້ຳດີກ 1 ຈຳກັດ, ເຊິ່ງເປັນບໍລິສັດຮຸ້ນສ່ວນຈົດທະບຽນ ສ້າງຕັ້ງດຳເນີນການໃນ ສປປ ລາວ, ໂດຍພິຈາລະນາຮ່ວມທຶນມູນຄ່າ 0,2 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 1.634 ລ້ານກີບ. ບໍລິສັດຮຸ້ນສ່ວນ ດຳເນີນທຸລະກິດຜະລິດ ແລະ ຂາຍກະແສໄຟ.

ບໍລິສັດ ນ້ຳເທີນ 1 ພາວເວີ້ ຈຳກັດ

ໃນວັນທີ 4 ກັນຍາ 2017 , ບໍລິສັດ ໄດ້ລົງທຶນໃນບໍລິສັດໄຟຟ້ານ້ຳເທີນ 1 ພາວເວີ້ ຈຳກັດ, ເຊິ່ງເປັນບໍລິສັດຮຸ້ນສ່ວນຈົດທະບຽນ ສ້າງຕັ້ງດຳເນີນການໃນ ສປປ ລາວ, ໂດຍພິຈາລະນາຮ່ວມທຶນມູນຄ່າ 0,75 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 6.205 ລ້ານ ກີບ. ບໍລິສັດຮຸ້ນສ່ວນ ດຳເນີນທຸລະກິດຜະລິດ ແລະ ຂາຍກະແສໄຟ.

ບໍລິສັດ ນ້ຳພຸນ ພາວເວີ້ ຈຳກັດ

ໃນວັນທີ 24 ກໍລະກົດ 2017 , ບໍລິສັດ ໄດ້ລົງທຶນໃນບໍລິສັດໄຟຟ້ານ້ຳພຸນ ພາວເວີ້ ຈຳກັດ, ເຊິ່ງເປັນບໍລິສັດຮຸ້ນສ່ວນຈົດທະບຽນ ສ້າງຕັ້ງດຳເນີນການໃນ ສປປ ລາວ, ໂດຍພິຈາລະນາຮ່ວມທຶນມູນຄ່າ 0,15 ລ້ານໂດລາສະຫະລັດ ຫຼື ທຽບເທົ່າ 1.237 ລ້ານກີບ. ບໍລິສັດຮຸ້ນສ່ວນ ດຳເນີນທຸລະກິດຜະລິດ ແລະ ຂາຍກະແສໄຟ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ບົດອະທິບາຍຊ້ອນທ້າຍໂດຍຫຍໍ້ ປະກອບເອກະສານລາຍງານການເງິນລວມ

ສຳລັບຮອບເວລາລາຍງານສາມເດືອນ ສິ້ນສຸດ ວັນທີ 30 ກັນຍາ 2017 (ກ່ອນກວດສອບ)

ເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນໃນວັນທີ 30 ກັນຍາ 2017 ແລະ 31 ທັນວາ 2016 ແລະ ເງິນປັນຜົນສຳລັບງວດເກົ້າເດືອນສິ້ນສຸດວັນທີ 30 ກັນຍາ 2017 ແລະ 2016 ມີດັ່ງນີ້:

	ອັດຕາສ່ວນຂອງເງິນລົງທຶນ			ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
				ມູນຄ່າ		ຄ່າເຊື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ຈາກເງິນປັນຜົນ	
	30 ກັນຍາ 2017	31 ທັນວາ 2016	ປະເພດຂອງ ທຸລະກິດ	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	30 ກັນຍາ 2016
	(%)			(ລ້ານກີບ)									
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງຶ່ມ 2 ຈຳກັດ (Nam Ngum 2)	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	417.024	451.954	64.170	149.413
ບໍລິສັດ ໄຟຟ້າ ນ້ຳລິກ 1-2 ຈຳກັດ (Nam Lik 1-2)	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	71.056	65.281	-	7.550
ບໍລິສັດ ໄຟຟ້າ ນ້ຳງຶ່ມ 5 ຈຳກັດ (Nam Ngum 5)	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	94.107	89.493	-	-
ບໍລິສັດ ນ້ຳເທີນ1 ພາວເວີ້ ຈຳກັດ (Nam Thuen 1)	15	-	ຜະລິດໄຟຟ້າ	6.205	-	-	-	6.205	-	6.205	-	-	-
ລວມ				**573.209**	**567.004**	-	-	**573.209**	**567.004**	**588.392**	**606.728**	**64.170**	**156.963**
ບໍລິສັດຮຸ້ນສ່ວນ													
ບໍລິສັດ ເທີນຫີນບຸນ ພາວເວີ ຈຳກັດ (THPC)	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	1.620.226	1.666.995	265.207	-
ບໍລິສັດ ຫ້ວຍເຮາະ ພາວເວີ ຈຳກັດ (HHPC)	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	15.290	15.820	9.857	-
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ("LHPC")	60	60	ຜະລິດໄຟຟ້າ	9.760	9.760	-	-	9.760	9.760	8.061	7.623	-	-
ບໍລິສັດ ໄຟຟ້າ ນ້ຳດິກ ຈຳກັດ ("Nam Dik 1")	70	-	ຜະລິດໄຟຟ້າ	1.634	-	-	-	1.634	-	1.634	-	-	-
ບໍລິສັດ ນ້ຳພຸນ ພາວເວີ້ ຈຳກັດ ("NPPC")	51	51	ຜະລິດໄຟຟ້າ	1.237	-	-	-	1.237	-	1.237	-	-	-
ລວມ				**1.134.498**	**1.131.627**	-	-	**1.134.498**	**1.131.627**	**1.646.448**	**1.690.438**	**275.074**	-
ລວມທັ້ງໝົດ				**1.707.707**	**1.698.631**	-	-	**1.707.707**	**1.698.631**	**2.234.841**	**2.297.166**	**339.234**	**156.963**

ສຳລັບບໍລິສັດ ເທີນຫີນບຸນ ພາວເວີ້ ຈາກັດ (THPC), ບໍລິສັດ ຫ້ວຍເຫາະ ພາວເວີ້ ຈາກັດ (HHPC), ບໍລິສັດ ຫ້ວຍລຳພັນ ຕອນລຸ່ມ ຈຳກັດ (LHPC), ນ້ຳດິກ 1 (Nam Dik 1) ແລະ ບໍລິສັດ ນ້ຳພຸນ ຈຳກັດ (NPPC), ເຖິງແມ່ນວ່າກຸ່ມບໍລິສັດມີຮຸ້ນສ່ວນຢູ່ໃນບໍລິສັດເຫຼົ່ານັ້ນຫຼາຍກວ່າ ຫຼື ໜ້ອຍກວ່າ 50% ກໍ່ຕາມ, ແຕ່ອີງຕາມເງື່ອນໄຂຂອງບໍລິສັດຮຸ້ນສ່ວນ, ບໍລິສັດໄດ້ ຮັບສິດໃນການລົງມະຕິຄະແນນສຽງ ແລະ ສຽງໃນສະພາຜູ້ບໍລິຫານ ຊຶ່ງສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄອບຄຸມທັງໝົດ). ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າ ເງິນລົງທຶນເຫຼົ່ານີ້ເປັນເງິນລົງທຶນໃນບໍລິສັດຮຸ້ນສ່ວນ.

ສຳລັບ ບໍລິສັດ ໄຟຟ້າ ນ້ຳລິກ 1-2 ຈຳກັດ (Nam Lik 1-2), ບໍລິສັດ ນ້ຳງື່ມ5 ຈຳກັດ (Nam Ngum 5) ແລະ ບໍລິສັດ ນ້ຳເທີນ 1 ຈາກັດ (Nam Thuen1), ກຸ່ມບໍລິສັດໄດ້ຮັບສິດໃນການອອກສຽງຂອງສະພາຜູ້ບໍລິຫານ ຊຶ່ງສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄອບຄຸມທັງໝົດ). ຕາມທີ່ໄດ້ລະບຸໄວ້ໃນສັນຍາ ຂອງຜູ້ຖືຮຸ້ນ. ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າເປັນການລົງທຶນໃນວິສາຫະກິດຮ່ວມ.

6 ເງິນລົງທຶນຈ່າຍລ່ວງໜ້າ

		ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	*ໝາຍເຫດ*	2017	2016
		(ລ້ານກີບ)	
ວັນທີ 1 ມັງກອນ		3.133.596	3.690.647
ເພີ່ມຂຶ້ນ		825.300	77.264
ລາຍຈ່າຍການເງິນ		9.017	9.479
ໂອນຊັບສິນພາຍໃຕ້ສັນຍາສຳປະທານ	7	-	(686.379)
ວັນທີ 30 ກັນຍາ		**3.967.913**	**3.091.011**

ເງິນລົງທຶນຈ່າຍລ່ວງໜ້າ 30 ກັນຍາ 2017 ແລະ 31 ທັນວາ 2016 ມີດັ່ງນີ້:

		ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
		30 ກັນຍາ	31 ທັນວາ
	ປະເພດ	2017	2016
		(ລ້ານກີບ)	
ນ້ຳຄານ 3	ຊັບສິນ	310.850	301.833
ນ້ຳຈຽນ 1	ຊັບສິນ	678.504	678.504
ນ້ຳຫີນບຸນ	ຊັບສິນ	205.955	205.955
ເຊເສັດ 3	ຊັບສິນ	149.418	149.418
ນ້ຳງື່ມ 1 Ext DFE	ຊັບສິນ	488.494	488.494
ນ້ຳງື່ມ 1 Ext Unit 6	ຊັບສິນ	242.231	242.231
ນ້ຳອູ 2,5,6	IPP	364.640	364.640
ນ້ຳງຽບ 2	IPP	111.470	111.470
ນ້ຳແບ່ງ	IPP	42.138	42.138
ເຊຂະໜານ 3	IPP	232.163	232.163
ນ້ຳລີກ 1	IPP	34.680	34.680
ນ້ຳມັງ 1	IPP	37.596	37.596
ນ້ຳທາ 1	IPP	244.474	244.474
ໄຊຍະບູລີ ແລະ ດອນສະໂຮງ	IPP	825.300	-
ລວມ		**3.967.913**	**3.133.596**

ໃນວັນທີ 21 ກໍລະກົດ 2017, ບໍລິສັດ ແລະ ຟຟລ ໄດ້ລົງນາມເຊັນບົດບັນທຶກຄວາມເຂົ້າໃຈສຳລັບການໂອນຮຸ້ນ ໃນບໍລິສັດ ດອນສະໂຮງ ພາວເວີ້ ຈຳກັດ ແລະ ບໍລິສັດ ໄຊຍະບຸລີ ພາວເວີ້ ຈຳກັດ. ເງິນລົງທຶນຈ່າຍລ່ວງໜ້າ ຈຳນວນ 100 ລ້ານໂດລາ ສະຫະລັດ ຫຼື ທຽບເທົ່າ 825.000 ລ້ານກີບ ໄດ້ຖືກໂອນໄປໃຫ້ຟຟລ ເມື່ອວັນທີ 1 ສິງຫາ 2017

7 ຊັບສິນພາຍໃຕ້ສັນຍາສຳປະທານ

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນແບບ ແຍກ	
ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	*ໝາຍເຫດ*	2017	2016	2017	2016
			(ລ້ານກີບ)		
ວັນທີ 1 ມັງກອນ		9.435.337	4.343.130	9.412.504	4.343.130
ເພີ່ມຂຶ້ນ		387.330	4.544.906	275.090	4.544.906
ໂອນຈາກເງິນຈ່າຍລ່ວງໜ້າເພື່ອການລົງທຶນ	*6*	-	686.379	-	686.379
ຫັກຄ່າຫຼຸ້ຍຫ້ຽນ		312.574	(309.848)	311.739	(309.848)
ວັນທີ 30 ກັນຍາ		**9.510.247**	**9.264.567**	**9.376.009**	**9.264.567**

8 ໜີ້ສິນທີ່ມີພາລະດອກເບ້ຍ

ເງິນກູ້ຍືມໄລຍະສັ້ນ

ໃນວັນທີ 27 ກໍລະກົດ 2017 ບໍລິສັດ ໄດ້ເຊັນສັນຍາກູ້ຍືມເພີ່ມ ກັບ ທະນາຄານກະສິກອນໄທ (KBANK) ສຳລັບສິນເຊື່ອ ຈຳນວນ 100 ລ້ານໂດລາສະຫະລັດ ເພື່ອຈຸດປະສົງໃນການຈ່າຍເງິນລ່ວງໜ້າສຳລັບການໂອນຮຸ້ນ ໃນໂຄງການເຂື່ອນໄຟຟ້າ ໄຊຍະບຸລີ ແລະ ໂຄງການເຂື່ອນໄຟຟ້າດອນສະໂຮງ, ໃນອັດຕາດອກເບ້ຍເງິນກູ້ຍືມ LIBOR 6 ເດືອນ+ 2,65%, ໃນ ນັ້ນລວມມີເງິນກູ້ວົງເງິນທີ 1 ຈຳນວນ 85 ລ້ານໂດລາສະຫະລັດ ແລະ ເງິນກູ້ວົງເງິນທີ 2 ຈຳນວນ 15 ລ້ານໂດລາສະຫະລັດ. ບໍລິສັດ ໄດ້ຮັບເງິນກູ້ວົງເງິນທີ 1 ແລະ 2 ຈຳນວນທັງໝົດ 100 ລ້ານໂດລາສະຫະລັດ ໃນວັນທີ 31 ກໍລະກົດ 2017, ເງິນກູ້ ຈະສິ້ນສຸດໃນວັນທີ 31 ກໍລະກົດ 2018. ນອກຈາກນັ້ນບໍລິສັດ ຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ຕົວຢ່າງ ອັດຕາສ່ວນຄວາມສາມາດໃນການຊຳລະໜີ້, ອັດຕາສ່ວນໜີ້ສິນຕໍ່ທຶນ ແລະ ການຈ່າຍເງິນປັນຜົນ.

ເງິນກູ້ຢືມໄລຍະຍາວ

		ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
		30 ກັນຍາ	31 ທັນວາ
	ໝາຍເຫດ	2017	2016
		(ລ້ານກີບ)	
ເງິນກູ້ຢືມໄລຍະຍາວ - ຈັດເປັນໄລຍະສັ້ນ			
- ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	*13*	442.881	132.173
- ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ		87.064	82.311
ລວມເງິນກູ້ຢືມໄລຍະຍາວ - ຈັດເປັນໄລຍະສັ້ນ		**529.945**	**214.484**
ເງິນກູ້ຢືມໄລຍະຍາວ - ຈັດເປັນໄລຍະຍາວ			
- ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	*13*	3.888.437	444.651
- ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ		495.970	399.648
ລວມເງິນກູ້ຢືມໄລຍະຍາວ - ຈັດເປັນໄລຍະຍາວ		**4.384.407**	**844.299**
ລວມເງິນກູ້ຢືມໄລຍະຍາວ		**4.914.352**	**1.058.783**

ສັນຍາການຊຳລະໜີ້

ວັນທີ 3 ກຸມພາ 2017, ກຸ່ມບໍລິສັດ ໄດ້ລົງນາມໃນສັນຍາຊຳລະໜີ້ເພີ່ມເຕີມ ("ສັນຍາ") ລວມມູນຄ່າທັງໝົດ 482 ລ້ານ ໂດລາສະຫາລັດ ຫຼື ທຽບເທົ່າ 3.957.400 ລ້ານກີບ ກັບ ຟຟລ. ຟຟລ ເປັນຜູ້ກູ້ຢືມ ໂດຍອີງຕາມໂຄງການພະລັງງານນ້ຳຄານ 2 ແລະ ຫ້ວຍລຳພັນໃຫຍ່ ພາຍໃຕ້ສັນຍາເງິນກູ້ເລກທີ 0227/ຟຟລ ແລະ 0220/ຟຟລ, ລົງວັນທີ 21 ມັງກອນ 2013 ກັບ ລັດຖະບານ ສປປ ລາວ ("ລັດຖະບານ") ເຊິ່ງກອງທຶນສະໜອງໃຫ້ໂດຍ ທະນາຄານ ສົ່ງອອກ-ນຳເຂົ້າ ຂອງ ສປ ຈີນ (ຜູ້ໃຫ້ກູ້) ແລະ ໄດ້ເຮັດສັນຍາຜ່ານລັດຖະບານ. ນອກເໜືອຈາກການໂອນຊັບສິນ, ທັງສອງຝ່າຍໄດ້ຕົກລົງເຫັນດີ ໃຫ້ກຸ່ມບໍລິສັດ ຈ່າຍ ເງິນໃຫ້ແກ່ ຟຟລ ເທົ່າກັບທີ່ທາງ ຟຟລ ໄດ້ຈ່າຍໃຫ້ກັບ ລັດຖະບານ, ສຳລັບລັດຖະບານຈ່າຍຄືນໃຫ້ກັບຜູ້ໃຫ້ກູ້ຢືມ ຕາມສັນຍາ ການກູ້ຢືມຕົ້ນສະບັບ. ເຊິ່ງເງິນກູ້ຢືມເຫຼົ່ານີ້ບໍ່ມີຫຼັກຊັບຄ້ຳປະກັນ ແລະ ບໍ່ມີພາລະຜູກພັນອື່ນໆ ທີ່ນອກເໜືອຈາກການຊຳລະ ເງິນຕາມຕາຕະລາງທີ່ໄດ້ຕົກລົງກັນ.

ສັນຍາກູ້ຢືມໄລຍະຍາວຈາກສະຖາບັນການເງິນ

ໃນວັນທີ 31 ກໍລະກົດ 2017 ບໍລິສັດ ໄດ້ເຊັນສັນຍາກູ້ຢືມ ກັບທະນາຄານລາວຝລັ່ງ ຈຳກັດ (BFL) ສຳລັບສິນເຊື່ອ ຈຳນວນ 17.20 ລ້ານຢູໂຣ ສາລັບໃຊ້ເປັນທຶນໝຸນວຽນໃນບໍລິສັດ ໃນອັດຕາດອກເບ້ຍ EUR LIBOR 3ເດືອນ + 3,9 % ແລະຕ້ອງ ຈ່າຍເປັນໄຕມາດ. ໄລຍະເວລາປອດໜີ້ແມ່ນ 18 ເດືອນ ນັບຈາກເງິນກູ້ວົງເງິນທີ 1 ວັນທີ 21 ສິງຫາ 2017, ບໍລິສັດ ຈະຊຳລະ ເງິນກູ້ຢືມພາຍໃນ 7 ປີ ຫຼັງຈາກໄລຍະປອດໜີ້ສິ້ນສຸດ. ບໍລິສັດ ໄດ້ຮັບເງິນກູ້ວົງເງິນທີ 1 ຈຳນວນ 8,6 ລ້ານຢູໂຣ ໃນວັນທີ 21 ສິງຫາ 2017, ບໍລິສັດໄດ້ຮັບເງິນກູ້ງວດທີ 2 ຈຳນວນ 8,6 ລ້ານຢູໂຣ ໃນວັນທີ 12 ກັນຍາ 2017 ນອກຈາກນັ້ນບໍລິສັດ ຕ້ອງ ປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ຕົວຢ່າງ ອັດຕາສ່ວນຄວາມສາມາດໃນການຊຳລະໜີ້, ອັດຕາສ່ວນໜີ້ສິນຕໍ່ທຶນ ແລະ ການຈ່າຍເງິນປັນຜົນ.

ການເຄື່ອນໄຫວເງິນກູ້ຢືມໄລຍະຍາວ ສຳລັບ ໄລຍະເວລາເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017 ແລະ 2016 ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	2017	2016
	(ລ້ານກີບ)	
ວັນທີ 1 ມັງກອນ	1.508.783	1.019.464
ເພີ່ມຂຶ້ນ	3.656.349	185.502
ຈ່າຍເງິນຄືນ	(304.814)	(171.041)
ຜົນກະທົບຈາກການແລກປ່ຽນເງິນຕາ	54.034	6.196
ວັນທີ 30 ກັນຍາ	**4.914.352**	**1.040.121**

9 ຮຸ້ນກູ້

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ	31 ທັນວາ
	2017	2016
	(ລ້ານກີບ)	
ຮຸ້ນກູ້	4.222.933	4.060.173
ລາຍຈ່າຍໃນການດຳເນີນງານ	(69.404)	(74.237)
ສຸດທິ	**4.153.529**	**3.985.936**

ການເຄື່ອນໄຫວໃນຮຸ້ນກູ້ ສຳລັບຮອບໄລຍະເວລາ ເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017 ແລະ 2016 ມີດັ່ງຕໍ່ໄປນີ້

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
ຮອບເວລາ ເກົ້າເດືອນ ສິ້ນສຸດ ວັນທີ 30 ກັນຍາ	2017	2016
	(ລ້ານກີບ)	
ໃນວັນທີ 1 ມັງກອນ	3.985.936	1.452.163
ເພີ່ມຂຶ້ນ ສຸດທິ	-	2.469.288
ການຫຼຸດຜ່ອນຄ່າທຳນຽມໃນການຈັດຈຳໜ່າຍ	4.833	2.037
ຜົນກະທົບຈາກການແລກປ່ຽນເງິນຕາ	162.760	67.579
ໃນວັນທີ 30 ກັນຍາ	**4.153.529**	**3.991.067**

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງການອອກຮຸ້ນກູ້ ໃນປີ 2016 ໄດ້ລະບຸໄວ້ໃນຕາມຕະລາງ ດັ່ງລຸ່ມນີ້:

ລາຍການ	ຮຸ່ນແບບ 1	ຮຸ່ນແບບ 2	ຮຸ່ນແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.
ລວມລາຄາທີ່ສະເໜີ	51.000 ລ້ານໂດລາ	166.000 ລ້ານໂດລາ	95.000 ລ້ານໂດລາ
ຈຳນວນທີ່ອອກ	51.000 ໜ່ວຍ	166.000 ໜ່ວຍ	95.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 5% ຕໍ່ ປີ	ຄົງທີ່ 5,59% ຕໍ່ ປີ	ຄົງທີ່ 5,98% ຕໍ່ ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,24% ຕໍ່ປີ	5,85% ຕໍ່ປີ	6,26% ຕໍ່ ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ
ອາຍຸ	7 ປີ	10 ປີ	12 ປີ
ວັນທີ ຄົບກຳນົດ	2 ກັນຍາ 2023	2 ກັນຍາ 2026	2 ກັນຍາ 2028

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງການອອກຮຸ້ນກູ້ ໃນປີ 2014 ໄດ້ລະບຸໄວ້ໃນຕາມຕະລາງ ດັ່ງລຸ່ມນີ້:

ລາຍການ	ຮຸ່ນແບບ 1	ຮຸ່ນແບບ 2	ຮຸ່ນແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.
ລວມລາຄາທີ່ສະເໜີ	1.500 ລ້ານບາດ	2.000 ລ້ານບາດ	3.000 ລ້ານບາດ
ຈຳນວນທີ່ອອກ	1.500.000 ໜ່ວຍ	2.000.000 ໜ່ວຍ	3.000.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 4,95% ຕໍ່ ປີ	ຄົງທີ່ 5,20% ຕໍ່ ປີ	ຄົງທີ່ 5,45% ຕໍ່ ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,26% ຕໍ່ປີ	5,54% ຕໍ່ປີ	5,82% ຕໍ່ ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ
ອາຍຸ	5 ປີ	7 ປີ	10 ປີ
ວັນທີ ຄົບກຳນົດ	12 ທັນວາ 2019	12 ທັນວາ 2021	12 ທັນວາ 2024

10 ໜີ້ຕ້ອງຈ່າຍສັນຍາແລກປ່ຽນເງິນຕາ (Swap)

ສັນຍາແລກປ່ຽນເງິນຕາຕ່າງປະເທດ

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2017	31 ທັນວາ 2016
	(ລ້ານກີບ)	
ໜີ້ຕ້ອງຈ່າຍສັນຍາແລກປ່ຽນເງິນຕາ	1.642.583	1.620.851
ໜີ້ຕ້ອງຮັບສັນຍາແລກປ່ຽນເງິນຕາ	(1.612.520)	(1.489.735)
ສ່ວນຕ່າງກຳໄລສັນຍາແລກປ່ຽນເງິນຕາ	12.695	14.560
ສຸດທິ	**42.758**	**145.676**

ສັງລວມເງື່ອນໄຂຂອງສັນຍາແລກປ່ຽນເງິນຕາຕ່າງປະເທດ ທີ່ສຳຄັນມີດັ່ງນີ້:

ລຳດັບ	ຈຳນວນທີ່ ອອກຮຸ້ນກູ້ (ລ້ານບາດ)	Swap ຈຳນວນ (ລ້ານໂດລາ)	ໄລຍະການຊຳ ລະເງິນ	ອັດຕາ ດອກເບ້ຍ ທີ່ແທ້ຈິງ	ອັດຕາ Swap	ໄລຍະການ ຊຳລະເງິນ
1	1.500	45,59	ເດືອນ ທັນວາ 2019	4,95%	Libor 6 ເດືອນ+3,36 %	ສອງຄັ້ງຕໍ່ປີ ໂດຍ ເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2019
2	2.000	60,79	ເດືອນ ທັນວາ 2021	5,20%	Libor 6 ເດືອນ+3,61%	ສອງຄັ້ງຕໍ່ປີ ໂດຍ ເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2021
3	3.000	91,18	ເດືອນ ທັນວາ 2024	5,45%	Libor 6 ເດືອນ+3,795%	ສອງຄັ້ງຕໍ່ປີ ໂດຍ ເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2024

ສັນຍາແລກປ່ຽນອັດຕາດອກເບ້ຍ

ໃນໄລຍະ ເກົ້າເດືອນ ສິ້ນສຸດວັນທີ 30 ກັນຍາ 2017 ບໍລິສັດ ໄດ້ເຮັດສັນຍາແລກປ່ຽນອັດຕາດອກເບ້ຍກັບທະນາຄານ ຕ່າງປະເທດ ເຊິ່ງເຮັດໃຫ້ບໍລິສັດ ຕ້ອງໄດ້ຈ່າຍເງິນລ່ວງໜ້າ

ໃນວັນທີ 30 ກັນຍາ 2017, ຍອດເຫຼືອຂອງເງິນຈ່າຍລ່ວງໜ້າສັນຍາ ແລກປ່ຽນອັດຕາດອກເບ້ຍມີ ດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2017	31 ທັນວາ 2016
	(ລ້ານກີບ)	
ສ່ວນທີ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ	14.425	-
ສ່ວນທີ່ຍັງບໍ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບສັນຍາ ແລກປ່ຽນອັດຕາດອກເບ້ຍ	43.919	-
ລວມ	**58.344**	**-**

ສັງລວມເງື່ອນໄຂຂອງສັນຍາແລກປ່ຽນອັດຕາດອກເບ້ຍ ທີ່ສຳຄັນມີດັ່ງນີ້:

ລຳດັບ	ຈຳນວນເຕັມ (ລ້ານບາດ)	ສັນຍາສິ້ນສຸດ ວັນທີ	ອັດຕາດອກ ເບ້ຍທີ່ແທ້ຈິງ	ອັດຕາ Swap	ໄລຍະການ ຊຳລະເງິນ
1	22,80	ເດືອນ ທັນວາ 2019	Libor 6 ເດືອນ	ຕ່ຳສຸດ 1,75% - ສູງສຸດ 2,55%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2019
2	30,39	ເດືອນ ທັນວາ 2021	Libor 6 ເດືອນ	ຕ່ຳສຸດ 1,75% - ສູງສຸດ 3,35%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2021
3	45,59	ເດືອນ ທັນວາ 2021	Libor 6 ເດືອນ	ຕ່ຳສຸດ 1,75% - ສູງສຸດ 3,35%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ເດືອນ ມິຖຸນາ 2015 ເຖິງ ເດືອນ ທັນວາ 2021

11 ກຳໄລພື້ນຖານຕໍ່ຮຸ້ນ

ການຄຳນວນກຳໄລພື້ນຖານຕໍ່ຮຸ້ນ ສຳລັບຮອບເວລາສາມເດືອນ ສິ້ນສຸດ ໃນວັນທີ 30 ກັນຍາ 2017 ແລະ 2016 ແມ່ນຄິດໄລ່ກຳໄລສຸດທິໃນຮອບເວລາທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງກຸ່ມບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍທີ່ອອກຈຳໜ່າຍ ລະຫວ່າງ ໄລຍະເວລາ ດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2017	2016	2017	2016
ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ລ້ານກີບ)	229.272	267.922	228.990	267.922
ຈຳນວນຮຸ້ນທີ່ອອກຈຳໜ່າຍ (ລ້ານຮຸ້ນ)	1.679	1.679	1.679	1.679
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	**136,55**	**159,54**	**136,38**	**159,54**

12 ເງິນປັນຜົນ

ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ຈັດຂຶ້ນໃນວັນທີ 23 ສິງຫາ 2017, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບຫົກເດືອນ ແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2017 ດ້ວຍຈຳນວນ 110 ຕໍ່ຮຸ້ນ ເຊິ່ງຈຳນວນທັງໝົດ ແມ່ນ 184.723 ລ້ານກີບ. ເງິນປັນຜົນແມ່ນໄດ້ເບີກຈ່າຍໃນຊ່ວງເດືອນຕຸລາ 2017.

ປະຊຸມສາມັນຜູ້ຖືຮຸ້ນປະຈຳປີ ຈັດຂຶ້ນໃນວັນທີ 24 ສິງຫາ 2016, ມີມັດຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບເວລາຫົກເດືອນແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2016 ດ້ວຍຈຳນວນ 130 ຕໍ່ຮຸ້ນ ເຊິ່ງຈຳນວນທັງໝົດ ແມ່ນ 218.309 ລ້ານກີບ. ເງິນປັນຜົນແມ່ນໄດ້ເບີກຈ່າຍໃນຊ່ວງເດືອນກັນຍາ 2016.

13 ພາກສ່ວນທີ່ກ່ຽວຂ້ອງ

ສຳລັບຈຸດປະສົງຂອງເອກະສານລາຍງານການເງິນເຫຼົ່ານີ້, ບຸກຄົນທີ່ໄດ້ຮັບການພິຈາລະນາວ່າກ່ຽວຂ້ອງກັບກຸ່ມບໍລິສັດ, ຖ້າກຸ່ມບໍລິສັດມີຄວາມສາມາດ, ທາງກົງ ຫຼື ທາງອ້ອມ, ທີ່ຈະຄວບຄຸມ ຫຼື ເຂົ້າຮ່ວມຄວບຄຸມພາກສ່ວນ ຫຼື ການປະຕິບັດ ອິດທິພົນທີ່ສຳຄັນນອກເໜືອຈາກພາກສ່ວນໃນການສ້າງເອກະສານລາຍງານການເງິນ ແລະ ການຕັດສິນໃຈໃນການດຳເນີນງານ ຫຼື ນອກເໜືອໄປຈາກນີ້ ຫຼື ໃນກໍລະນີກຸ່ມບໍລິສັດ ແລະ ພາກສ່ວນຈະຢູ່ພາຍໃຕ້ການຄວບຄຸມດຽວກັນ ຫຼື ພາຍໃຕ້ອິດທິພົນທີ່ສຳຄັນ. ກິດຈະການທີ່ກ່ຽວຂ້ອງອາດຈະເປັນນິຕິບຸກຄົນ ຫຼື ສຳນັກງານຕ່າງໆ.

ຊື່ຂອງສຳນັກງານ	ສ້າງຕັ້ງຂຶ້ນໃນປະເທດ/ສັນຊາດ	ລັກສະນະຄວາມສຳພັນ
ລັດວິສາຫະກິດໄຟຟ້າລາວ	ສ ປປ ລາວ	ບໍລິສັດແມ່
ບໍລິສັດ ໄຟຟ້າຫ້ວຍເຫາະຈຳກັດ	ສ ປປ ລາວ	ບໍລິສັດ ຮຸ້ນສ່ວນ
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ	ສ ປປ ລາວ	ບໍລິສັດລູກ, ຖືຮຸ້ນ 80%
ບໍລິສັດ ອີດີເອວເຈນ ໂຊ່ລ່າ ພາວເວີ້ ຈຳກັດ	ສ ປປ ລາວ	ບໍລິສັດລູກ, ຖືຮຸ້ນ 60%

ນະໂຍບາຍການກຳນົດລາຄາໂດຍສະເພາະການດຳເນີນງານສຳລັບແຕ່ລະລາຍການເປັນໄປດັ່ງນີ້:

ລາຍການ	ນະໂຍບາຍລາຄາ
ຂາຍໄຟຟ້າ	ລາຄາຕາມສັນຍາ
ລາຍຈ່າຍດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບຮອບໄລຍະເວລາ ສາມເດືອນ ສິ້ນສຸດວັນທີ 30 ກັນຍາ 2017 ແລະ 2016 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2017	2016	2017	2016
		(ລ້ານກີບ)		
ບໍລິສັດແມ່				
ຂາຍກະແສໄຟຟ້າ	402.187	389.860	401.584	389.860
ລາຍຈ່າຍທາງການເງິນ	52.465	2.638	52.465	2.638

ຍອດຄົງເຫຼືອໃນວັນທີ 30 ກັນຍາ 2017 ແລະ 31 ທັນວາ 2016 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016
		(ລ້ານກີບ)		
ຈ່າຍລ່ວງໜ້າສຳລັບລົງທຶນ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	3.958.896	3.109.676	3.958.896	3.109.676

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016
		(ລ້ານກີບ)		
ຊັບສິນບໍ່ໝຸນວຽນອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	-	35.000	-	35.000
ບໍລິສັດລູກ				
ບໍລິສັດ ອີດີເອວເຈນ ໂຊລ່າ ຈຳກັດ	-	-	302.507	35.955
ບໍລິສັດຮຸ້ນສ່ວນ				
ບໍລິສັດ ໄຟຟ້າຫ້ວຍເຫາະ ຈຳກັດ.	-	3.232	-	3.232
ລວມ	**-**	**38.232**	**302.507**	**74.187**
ເງິນໃຫ້ກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	33.108	-	33.108	-
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ				
ໜີ້ຕ້ອງຮັບການຄ້າ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	1.189.825	476.457	1.189.154	476.457
ໜີ້ຕ້ອງຮັບອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	10.277	10.173	10.277	10.173
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ້ ຈຳກັດ	-	-	488	493
ລວມ	**10.277**	**10.173**	**498.277**	**10.666**
ລວມທັງໝົດ	**1.200.102**	**486.630**	**1.199.919**	**487.123**

ການວິເຄາະອາຍຸລູກໜີ້ການຄ້າ ຈາກພາກສ່ວນທີ່ກ່ຽວຂ້ອງມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນແບບ ແຍກ	
	30 ກັນຍາ 2017	31 ທັນວາ 2016	30 ກັນຍາ 2017	31 ທັນວາ 2016
	(ລ້ານກີບ)			
ຍັງບໍ່ເຖິງກຳນົດ	289.300	191.394	288.629	191.394
ເກີນກຳນົດ				
- ໜ້ອຍກວ່າ 3 ເດືອນ	416.220	154.959	416.220	154.959
- 3 - 6 ເດືອນ	114.443	130.104	114.443	130.104
- 6 - 12 ເດືອນ	313.138	-	313.138	-
- ຫຼາຍກວ່າ 12 ເດືອນ	56.724	-	56.724	-
	1.189.825	**476.457**	**1.189.154**	**476.457**
ຫັກຄ່າເຜື່ອບັນຊີໜີ້ສົງໃສຈະສູນ	-	-	-	-
ສຸດທິ	**1.189.825**	**476.457**	**1.189.154**	**476.457**


	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2017	31 ທັນວາ 2016
	(ລ້ານກີບ)	
ໜີ້ຕ້ອງສົ່ງຊັບສິນພາຍໃຕ້ສັນຍາສຳປະທານ		
ບໍລິສັດແມ່		
ລັດວິສາຫະກິດໄຟຟ້າລາວ	-	3.957.400

ຕາມບົດບັນທຶກຄວາມເຂົ້າໃຈກ່ຽວກັບການໂອນຊັບສິນຂອງໂຄງການໂຮງໄຟຟ້າ ຫ້ວຍລໍາພັນໃຫຍ່ ແລະ ນ້ຳຄານ 2, ລະຫວ່າງ ບໍລິສັດ ກັບ ຟຟລ, ບໍລິສັດໄດ້ຮັບຮູ້ຊັບສິນເຫຼົ່ານັ້ນພາຍໃຕ້ສັນຍາສໍາປະທານ ໃນເອກະສານລາຍງານການເງິນປະຈໍາປີ ສິ້ນສຸດວັນ ທີ 31 ທັນວາ 2016. ກ່ອນໜ້າວັນທີ່ໂອນຊັບສິນ, ບໍລິສັດໄດ້ຈ່າຍເງິນລົງທຶນລ່ວງໜ້າເປັນຈໍານວນ 664.721 ລ້ານກີບ. ຕົ້ນທຶນ ທີ່ເຫຼືອຂອງຊັບສິນ ຮັບຮູ້ເປັນໜີ້ຕ້ອງສົ່ງພາຍໃຕ້ສັນຍາສໍາປະທານ

ຕໍ່ມາ ໃນເດືອນກຸມພາ 2017, ສັນຍາຊໍາລະໜີ້ ("ສັນຍາ") ໄດ້ມີການສະຫຼຸບຂໍ້ຕົກລົງລະຫວ່າງກຸ່ມບໍລິສັດ, ຟຟລ ແລະ ຜູ້ໃຫ້ ກູ້ຢືມ. ສັນຍາດັ່ງກ່າວໄດ້ໂອນພາລະຜູກພັນ ໃນການຊາລະເງິນກູ້ຢືມໄລຍະຍາວ ໂຄງການເຂື່ອນໄຟຟ້າພະລັງນ້ຳຈາກ ຟຟລ ຫາ ບໍລິສັດ.

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ກັນຍາ 2017	31 ທັນວາ 2016
	(ລ້ານກີບ)	
ເງິນກູ້ຢືມໄລຍະຍາວ		
ບໍລິສັດແມ່		
ລັດວິສາຫະກິດໄຟຟ້າລາວ		
- ໄລຍະສັ້ນ	442.881	132.173
- ໄລຍະຍາວ	3.888.437	444.651
ລວມ	**4.331.318**	**576.824**

ผู้อำนวยการใหญ่



ลัดตะนา ปะทุมวัน

หัวหน้าพะแนกบันชี

ถำใบ หลวงไชฯ

หัวหน้าพะแนกกวดสอบพายใน

มะนิวัน ยอดกองมี
